ອົງການໄອຍະການ ປະຊາຊົນ ສູງສຸດ
ພະແນກຮັບ ເລກທີ 290 / ອອປສ
ວັນທີ 29.7.14

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

_________00000__________

ກະຊວງປ້ອງກັນຄວາມສະຫງົບ
ຫ້ອງວ່າການກະຊວງ ປກສ

ເລກທີ 1561 /ຫວກ
ວັນທີ 09 / 07 / 2014

# ແຈ້ງການ

ເຖິງ: ບັນດາກະຊວງ,ອົງການທຽບເທົ່າ

ເລື່ອງ : ກ່ຽວກັບການຂຶ້ນທະບຽນສຳມະໂນຄົວ ແລະ ອອກບັດປະຈຳຕົວດ້ວຍລະບົບທັນສະໄໝ .

- ອີງຕາມແຈ້ງການ ຂອງຄະນະເລຂາທິການລັດຖະບານ ສະບັບເລກທີ 627/ຄລບ,ລົງວັນທີ 11 ເມສາ 2009 ກ່ຽວກັບ ການເຫັນດີອະນຸມັດໂຄງການຄຸ້ມຄອງພົນລະເມືອງດ້ວຍລະບົບທັນສະໄໝ.

- ອີງຕາມແຜນການຈັດຕັ້ງປະຕິບັດ ຂອງໂຄງການຄຸ້ມຄອງພົນລະເມືອງ ດ້ວຍລະບົບທັນສະໄໝ ໃນສະເພາະໜ້າ ແລະ ຍາວນານ.

- ອີງຕາມທິດຊີ້ນຳ ຂອງກະຊວງປ້ອງກັນຄວາມສະຫງົບ ກໍຄື ກົມຄຸ້ມຄອງສຳມະໂນຄົວ ແລະກໍ່ສ້າງຮາກຖານກ່ຽວກັບການຄຸ້ມຄອງຄອບຄົວພິເສດ.

ເພື່ອເຮັດໃຫ້ໂຄງການຄຸ້ມຄອງພົນລະເມືອງ ດ້ວຍລະບົບທັນສະໄໝໄດ້ຮັບການຈັດຕັ້ງປະຕິບັດ ໃຫ້ສຳເລັດໄປເທື່ອລະກ້າວ ແລະ ເພື່ອເປັນການຄຸ້ມຄອງຄອບຄົວພິເສດໃຫ້ມີຄວາມສະຫງົບປອດໄພ,ໄດ້ຂຶ້ນທະບຽນສຳມະໂນຄົວ ແລະ ອອກບັດປະຈຳຕົວ ຖືກຕ້ອງຕາມລະບຽບຫຼັກການ.

ຫ້ອງວ່າການກະຊວງ ປ້ອງກັນຄວາມສະຫງົບ ຂໍຖືເປັນກຽດ ແຈ້ງການມາຍັງ ຄອບຄົວພິເສດ ທີ່ຢູ່ບັນດາກະຊວງ ແລະ ອົງການທຽບເທົ່າ ຊາບວ່າ: ນັບແຕ່ວັນທີ      ເດືອນ 07 ປີ 2014 ເປັນຕົ້ນໄປ ກົມຄຸ້ມຄອງສຳມະໂນຄົວ ແລະ ກໍ່ສ້າງຮາກຖານ ກະຊວງປ້ອງກັນຄວາມສະຫງົບຈະໄດ້ລົງ ຈົດທະບຽນສຳມະໂນຄົວ ແລະ ອອກບັດປະຈຳຕົວ ດ້ວຍລະບົບທັນສະໄໝ ໃຫ້ແກ່ ບັນດາ ທ່ານ ຄອບຄົວພິເສດ ຢູ່ບັນດາກະຊວງ ແລະ ອົງການທຽບເທົ່າ ທີ່ນອນຢູ່ໃນແຕ່ລະເມືອງ ໃນນະຄອນຫຼວງວຽງຈັນ.

ດັ່ງນັ້ນ: ຫ້ອງວ່າການກະຊວງ ປກສ ຈິ່ງແຈ້ງການມາຍັງທ່ານ ເພື່ອຊາບ ແລະ ຂໍຄວາມຮ່ວມມືນຳດ້ວຍ .

ຫົວໜ້າຫ້ອງວ່າການກະຊວງ ປ້ອງກັນຄວາມສະຫງົບ

ຫ້ອງວ່າການກະຊວງ ປ້ອງກັນຄວາມສະຫງົບ

ພົຈວ ພູມມີ ວັນດີໄຊ

29/7/2014

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ
********************

ກະຊວງປ້ອງກັນຄວາມສະຫງົບ
ຫ້ອງວ່າການກະຊວງ

ເລກທີ..1637/ຫວກ.
ນະຄອນຫຼວງວຽງຈັນ,ວັນທີ..24/07/2014

# ໃບແຕ່ງຕັ້ງຊົ່ວຄາວ
# ຂອງຫົວໜ້າຫ້ອງວ່າການກະຊວງປ້ອງກັນຄວາມສະຫງົບ
# ວ່າດ້ວຍການແຕ່ງຕັ້ງພະນັກງານໄປວຽກທາງການ.

******************

ເພື່ອປະຕິບັດຕາມມະຕິ103 ຂອງສູນກາງພັກ; ກໍ່ຄືມະຕິເລກທີ: 01/92 ຂອງຄະນະກຳມະການປ້ອງກັນຊາດ - ປ້ອງກັນຄວາມສະຫງົບໃນໄລຍະໃໝ່ຂອງການປະຕິວັດ.

- ເພື່ອເຮັດໃຫ້ທິດທາງແຜນການ-ວຽກງານທີ່ກະຊວງປ້ອງກັນຄວາມສະຫງົບວາງອອກໃຫ້ປະກົດຜົນເປັນຈິງທັງຮັບປະກັນຄວາມສະຫງົບ, ຄວາມສະຫງົບລະພາບທາງດ້ານການເມືອງ ແລະ ຄວາມເປັນລະບຽບປອດໄພຂອງສັງຄົມ.

## ຫ້ອງວ່າການກະຊວງປ້ອງກັນຄວາມສະຫງົບຕົກລົງ:

ມາດຕາ 01: ແຕ່ງຕັ້ງບັນດາສະຫາຍທີ່ມີລາຍຊື່ລຸ່ມນີ້ໄປເຮັດວຽກຢູ່ ນະຄອນຫຼວງວຽງຈັນ 06 ຕົວເມືອງ ( ໃຫ້ກັບຄອບຄົວພິເສດ ); ກຳນົດ 160 ວັນ( ໜຶ່ງຮ້ອຍຫົກສິບ ວັນ) ໃບແຕ່ງຕັ້ງສະບັບນີ້ກຳນົດໃຊ້ໄດ້03 ເດືອນ.

| | |
|---|---|
| 1./ ພັທ ໜູໃບ ອິນທິສານ | ຮອງກົມຄຸ້ມຄອງສຳມະໂນຄົວ |
| 2./ ພັທ ທອງລິນ ໄຊສຸມຸນທາ | ຫົວໜ້າພະແນກ |
| 3./ ພັທ ນ ຈັນເພັງ ຈໍວົງສັກ | ຫົວໜ້າພະແນກ |
| 4./ ພັຕ ບົວໄລ ເພັດສົມພອນ | ຮອງພະແນກ |
| 5./ ພັຕ ນ ຂຶງຄຳ ບຸຜາ | ຮອງພະແນກ |
| 6./ ຮອ ຈັນໄຊ ພອນມະນີ | ວິຊາການ |
| 7./ ຮອ ນ ມະໄລທອງ ພັນທະວົງ | ວິຊາການ |
| 8./ ຮທ ນ ຄຸດທະນາ ຄຸນມະນີ | ວິຊາການ |
| 9./ ຮທ ວຽງໄຊ ພົມມະຈັນ | ວິຊາການ |
| 10./ ຮຕ ສຸບັນ ຫຼວງລາດ | ວິຊາການ |
| 11./ ຮຕ ໂອແດນ ເດດວິໄຊ | ວິຊາການ |
| 12./ ຮຕ ເຂັ້ມທອງ ສຸປັນຍາ | ວິຊາການ |
| 13./ ພະນັກງານ 02 | ສະຫາຍ ( ປ້ອງກັນສູນກາງ ) |

( ໃຫ້ຄິດໄລ່ອັດຕາກິນ ແລະ ຄ່ານ້ຳມັນລົດ )

**ມາດຕາ 02:** ບັນດາສະຫາຍທີ່ມີລາຍຊື່ຂ້າງເທິງນີ້ ມີໜ້າທີ່ປະສານສົມທົບ ກັບກົມກອງອ້ອມຂ້າງກະຊວງປ້ອງກັນຄວາມສະຫງົບ, ກອງບັນຊາການ ປກສ ແຂວງ, ປກສ ນະຄອນຫຼວງວຽງຈັນຕາມການມອບໝາຍ ຂອງຫົວໜ້າຫ້ອງວ່າການກະຊວງ, ພາຍຫຼັງທີ່ສຳເລັດໜ້າທີ່ວຽກງານແລ້ວ ໃຫ້ສະຫຼຸບລາຍງານກະຊວງ ຊາບດ້ວຍ.

**ມາດຕາ 03:** ບັນດາກົມໃຫຍ່, ກົມກອງ, ກອງບັນຊາການ ປກສ ແຂວງ ມີໜ້າທີ່ຮ່ວມມືອຳນວຍຄວາມສະດວກເພື່ອເຮັດໃຫ້ບັນດາສະຫາຍເຮັດສຳເລັດໜ້າທີ່ໆໄດ້ຮັບການມອບໝາຍເປັນຢ່າງດີ.

**ມາດຕາ 04:** ຂໍ້ຕົກລົງສະບັບນີ້ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ຮ ຫົວໜ້າຫ້ອງວ່າການກະຊວງປ້ອງກັນຄວາມສະຫງົບ.

ກະຊວງປ້ອງກັນຄວາມສະຫງົບ ຫ້ອງວ່າການກະຊວງ

ຈັນທອງ ທິງຄຳ